UNITED NATIONS JOINT PROGRAMME:

ແຜນງານຮ່ວມເພື່ອປັບປຸງສຸຂະພາບຈະເລີນພັນ, ແມ່, ເດັກເກີດໃໝ່, ເດັກນ້ອຍ ແລະ ໄວໜຸ່ມ ໃນ ສປປ ລາວ - ໄລຍະທີ 3

ສປປ ລາວ - 2023

ສະພາບລວມ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສປປ ລາວ) ມີປະຊາກອນ 7.2 ລ້ານຄົນ ແລະ ເປັນ ປະເທດທີ່ມີລາຍໄດ້ຕ່ຳ ໃນພາກພື້ນອາຊີຕາເວັນອອກສຽງໃຕ້. ເຖິງແມ່ນວ່າ ສປປ ລາວ ໄດ້ມີການເຕີບໂຕທາງດ້ານເສດຖະກິດ, ມີການພັດທະນາຢ່າງວ່ອງໄວ, ສປປ ລາວ ຍັງມີລະບົບການດູແລສຸຂະພາບທີ່ຈຳກັດ. ຜ່ານມາເຫັນວ່າ ອັດຕາການເສຍຊີວິດຂອງແມ່, ເດັກເກີດໃໝ່ ແລະ ເດັກນ້ອຍ ແລະ ອັດຕາຈະເລີນພັນໃນກຸ່ມໄວໜຸ່ມ ໄດ້ມີແນວໂນ້ມຫຼຸດລົງ, ແຕ່ວ່າ ເມື່ອທຽບໃສ່ບັນດາປະເທດໃກ້ຄຽງ ແລະ ປະເທດອື່ນໆໃນອາຊີຕາເວັນອອກສຽງໃຕ້ ເຫັນວ່າ ຍັງມີລະດັບທີ່ສູງຢູ່.

ບັນຫາດັ່ງກ່າວແມ່ນເກີດຂຶ້ນຈາກຫຼາຍໆປັດໃຈ ເຊັ່ນ: ມີຄວາມຈຳກັດໃນການເຂົ້າເຖິງການບໍລິການສຸຂະພາບຂັ້ນຕົ້ນ, ທີ່ຕັ້ງພູມສັນຖານ, ຄວາມໜາແໜ້ນຂອງປະຊາກອນ, ລະດັບຄວາມຮັ່ງມີ, ຊົນເຜົ່າ, ເພດ ແລະ ລະດັບການສຶກສາຂອງແມ່, ເຊິ່ງສິ່ງດັ່ງກ່າວນັ້ນເປັນປັດໃຈທີ່ສາມາດສົ່ງຜົນກະທົບຕໍ່ການຢູ່ລອດຂອງແມ່ ແລະ ເດັກນ້ອຍ ແລະ ຜົນໄດ້ຮັບຂອງການພັດທະນາ ຕະຫຼອດເຖິງຄວາມກ້າວໜ້າຂອງ ສປປ ລາວ ສູ່ການບັນລຸເປົ້າໝາຍພັດທະນາແບບຍືນຍົງ.

ການບໍລິການດູແລສຸຂະພາບທີ່ຄົບຊຸດ ແລະ ມີຄຸນນະພາບ ສຳລັບແມ່ ແລະ ເດັກນ້ອຍ ໃນ ສປປ ລາວ

ຍ້ອນເຫດຜົນດັ່ງກ່າວນີ້, ກະຊວງສາທາລະນະສຸກ ພ້ອມດ້ວຍ ລັດຖະບານລຸກຊຳບວກ, ອົງການສະຫະປະຊາຊາດສຳລັບເດັກ (UNICEF), ອົງການສະຫະປະຊາຊາດ ກອງທຶນສຳລັບປະຊາກອນ (UNFPA) ແລະ ອົງການອະນາໄມໂລກ (WHO) ຈຶ່ງ ໄດ້ຕັດສິນໃຈເຮັດວຽກຮ່ວມກັນພາຍໃຕ້ ແຜນງານຮ່ວມຂອງອົງການສະຫະ ປະຊາຊາດ ເພື່ອປັບປຸງ ສຸຂະພາບຈະເລີນພັນ, ແມ່, ເດັກເກີດໃໝ່, ເດັກນ້ອຍ ແລະ ໄວໜຸ່ມ (RMNCAH) ໃນ ສປປ ລາວ. ແຜນງານດັ່ງກ່າວໄດ້ຖືກສ້າງຕັ້ງຂຶ້ນ ໂດຍ ອີງໃສ່ຄວາມເຂົ້າໃຈຮ່ວມກັນວ່າການລົງທຶນໃນດ້ານ RMNCAH ກໍ່ຄືການລົງທຶນ ໂດຍກົງໃນການພັດທະນາຊັບພະຍາກອນມະນຸດ ຢູ່ໃນ ສປປ ລາວ ໃນຄະນະ ດຽວກັນກໍ່ຍັງເປັນການສົ່ງເສີມສຸຂະພາບໃຫ້ດີຂຶ້ນສຳລັບແມ່ຍິງ, ເດັກນ້ອຍ ແລະ ໄວໜຸ່ມ ໃນ ສປປ ລາວ.

ໄລຍະທີ 1 (2011-2016) ແລະ ໄລຍະທີ 2 (2017-2021) ຂອງແຜນງານ ໄດ້ ຊ່ວຍກຳນົດຂັ້ນຕອນເພື່ອປັບປຸງວຽກງານສຸຂະພາບຈະເລີນພັນ, ແມ່, ເດັກເກີດໃໝ່, ເດັກນ້ອຍ ແລະ ໄວໜຸ່ມ ໃນ ສປປ ລາວ ໂດຍສະໜັບສະໜູນກະຊວງສາທາລະນະສຸກ ໃນການກຳນົດຊຸດບໍລິການແບບເຊື່ອມສານ ສຸຂະພາບຈະເລີນພັນ, ແມ່, ເດັກເກີດໃໝ່, ເດັກນ້ອຍ ແລະ ໄວໜຸ່ມ ທີ່ມີຄຸນນະພາບ ແລະ ພັດທະນາບັນດາຄູ່ມືມາດຕະຖານ ແຫ່ງຊາດ, ເຄື່ອງມື ແລະ ທົດລອງນຳໃຊ້ວິທີການຕ່າງໆ ເພື່ອປັບປຸງການສະໜອງການ ບໍລິການສຸຂະພາບ.

ສປປ ລາວ - 2023



ແຂວງເປົ້າໝາຍຂອງແຜນງານ (ຈາກພາກເໜືອ ຫາ ພາກໃຕ້): ແຂວງ ບໍ່ແກ້ວ, ບໍລິຄຳໄຊ ແລະ ສະຫວັນນະເຂດ

ຂໍ້ມູນທີ່ສຳຄັນ

ພາກສ່ວນຈັດຕັ້ງປະຕິບັດແຜນງານ:
ກະຊວງສາທາລະນະສຸກ ໂດຍໄດ້ຮັບການສະໜັບສະໜູນດ້ານວິຊາການ ແລະ ດ້ານງົບປະມານຈາກ ອົງການ UNICEF, UNFPA ແລະ WHO

ຜູ້ໃຫ້ທຶນ:
ລັດຖະບານລຸກຊຳບວກ

ງົບປະມານທັງໝົດ:
6.5 ລ້ານ ເອີໂຣ

ໄລຍະເວລາຂອງແຜນງານ:
2022 - 2025

ແຜນງານສຸຂະພາບຈະເລີນພັນ, ແມ່, ເດັກເກີດໃໝ່, ເດັກນ້ອຍ ແລະ ໄວໜຸ່ມ ໃນ ສປປ ລາວ - ໄລຍະທີ 3

ສປປ ລາວ - 2023

ນັບຕັ້ງແຕ່ການສ້າງຕັ້ງແຜນງານນີ້, ສປປ ລາວ ໄດ້ມີຄວາມຄືບໜ້າຢ່າງຫຼວງຫຼາຍໃນການປັບປຸງວຽກງານສຸຂະພາບຈະເລີນພັນ, ແມ່, ເດັກເກີດໃໝ່, ເດັກນ້ອຍ ແລະ ໄວໜຸ່ມ *:

ອັດຕາການຕາຍຂອງແມ່



ອັດຕາການຕາຍຂອງເດັກລຸ່ມ 5 ປີ



ອັດຕາການເກີດລູກຂອງໄວໜຸ່ມ



ເຖິງຢ່າງໃດກໍ່ຕາມ, ຄຽງຄູ່ກັບຄວາມກ້າວໜ້ານັ້ນ ກໍຍັງມີສິ່ງທ້າທາຍຢູ່ ໃນການເຂົ້າເຖິງ, ຄວາມເທົ່າທຽມ ແລະ ຄຸນນະພາບຂອງການບໍລິການດ້ານສຸຂະພາບສຳລັບແມ່ຍິງ, ເດັກນ້ອຍ ແລະ ໄວໜຸ່ມ.

ດັ່ງນັ້ນ, ໄລຍະທີ 3 (2022-2025) ຂອງແຜນງານຈະສຸມໃສ່ແກ້ໄຂບັນດາສິ່ງທ້າທາຍດັ່ງກ່າວ ພ້ອມຍັງຈະສືບຕໍ່ຜັນຂະຫຍາຍຜົນສຳເລັດຕ່າງໆຈາກແຜນງານໄລຍະທີ່ຜ່ານມາ ແລະ ສືບຕໍ່ໃຫ້ການສະໜັບສະໜູນທີ່ສອດຄ່ອງ ແລະ ຕອບສະໜອງຕໍ່ເປົ້າໝາຍຍຸດທະສາດແຫ່ງຊາດວຽກງານສຸຂະພາບຈະເລີນພັນ, ແມ່, ເດັກເກີດໃໝ່, ເດັກນ້ອຍ ແລະ ໄວໜຸ່ມ ສຳລັບ ປີ 2016 - 2025 ແລະ ແຜນດຳເນີນງານສຳລັບ ປີ 2021-2025. ຍຸດທະສາດໃນໄລຍະທີ 3 ຂອງແຜນງານຮ່ວມຂອງອົງການສະຫະປະຊາຊາດ ຍັງຈະສຸມໃສ່ການສະໜັບສະໜູນ ກະຊວງສາທາລະນະສຸກ ເພື່ອປັບປຸງຄຸນນະພາບ, ປະສິດທິພາບ ແລະ ຄວາມຍືນຍົງ ຂອງການບໍລິການແບບເຊື່ອມສານສຸຂະພາບຈະເລີນພັນ, ແມ່, ເດັກເກີດໃໝ່, ເດັກນ້ອຍ ແລະ ໄວໜຸ່ມ ແລະ ຄວາມເທົ່າທຽມກັນຂອງຜົນໄດ້ຮັບທາງດ້ານສຸຂະພາບ. ໂດຍສະເພາະແມ່ນຈະເນັ້ນໃສ່ການຜັນຂະຫຍາຍບັນດາມາດຕະຖານ, ຄູ່ມື, ເຄື່ອງມື ແລະ ນະວັດຕະກຳຕ່າງໆ ທີ່ໄດ້ພັດທະນາຂຶ້ນໃນແຜນງານໄລຍະທີ 2 ແລະ ແກ້ໄຂສິ່ງທ້າທາຍທີ່ເປັນບຸລິມະສິດທີ່ພົ້ນເດັ່ນ, ໜຶ່ງໃນນັ້ນແມ່ນການຍົກສູງການຄຸ້ມຄອງ ແລະ ສົ່ງເສີມຄວາມເປັນເຈົ້າການຂອງຂັ້ນທ້ອງຖິ່ນໃນການຈັດຕັ້ງປະຕິບັດແຜນງານ ເພື່ອຮັບປະກັນການມີສ່ວນຮ່ວມຂອງຊຸມຊົນແບບຍືນຍົງ ແລະ ຜັນຂະຫຍາຍວຽກງານການບໍລິການສຸຂະພາບຈະເລີນພັນ, ແມ່, ເດັກເກີດໃໝ່, ເດັກນ້ອຍ ແລະ ໄວໜຸ່ມ. ນອກຈາກນັ້ນ, ແຜນງານໄລຍະທີ 3 ຍັງຈະສຸມໃສ່ ປັບປຸງການບໍລິການໃຫ້ມີການເຊື່ອມສານ ໂດຍເອົາຜູ້ມາຮັບບໍລິການເປັນໃຈກາງ ພ້ອມທັງປັບປຸງການສະໜອງການບໍລິການສຸຂະພາບໃຫ້ສອດຄ່ອງກັບຄວາມຕ້ອງການຂອງຊຸມຊົນຫລາຍຂຶ້ນ . ໃນປັດຈຸບັນ, ໄລຍະທີ 3 ຂອງແຜນງານຮ່ວມແມ່ນກຳລັງຈັດຕັ້ງປະຕິບັດຢູ່ 3 ແຂວງເປົ້າໝາຍຄື: ແຂວງບໍ່ແກ້ວ, ບໍລິຄຳໄຊ ແລະ ສະຫວັນນະເຂດ ເຊິ່ງເປັນແຂວງເປົ້າໝາຍຂອງແຜນງານຮ່ວມໃນໄລຍະຜ່ານມາ.

ຈຸດສຸມຂອງແຜນງານສຸຂະພາບຈະເລີນພັນ, ແມ່, ເດັກເກີດໃໝ່, ເດັກນ້ອຍ ແລະ ໄວໜຸ່ມ ໄລຍະທີ 3

ສຸຂະພາບຈະເລີນພັນ



- ຮອດປີ 2025, ເພີ່ມອັດຕາການຄຸມກຳເນີດ (ວິທີການທີ່ທັນສະໄໝ) ສຳລັບແມ່ຍິງທຸກຄົນ ໃຫ້ໄດ້ 65 ເປີເຊັນ ແລະ ຫຼຸດອັດຕາຄວາມຕ້ອງການດ້ານການຄຸມກຳເນີດແຕ່ບໍ່ໄດ້ຮັບການບໍລິການໃຫ້ໄດ້ 10 ເປີເຊັນ.
- ຮອດປີ 2025, ເພີ່ມອັດຕາການຄຸມກຳເນີດ (ວິທີການທີ່ທັນສະໄໝ) ຂອງໄວໜຸ່ມອາຍຸ 15 ຫາ 19 ປີ ໃຫ້ໄດ້ 35 ເປີເຊັນ ໂດຍການສະໜອງບໍລິການທີ່ເປັນມິດຕໍ່ໄວໜຸ່ມ

ສຸຂະພາບແມ່

- ຮອດປີ 2025, ປັບປຸງການໃຫ້ບໍລິການສຸຂະພາບສຳລັບແມ່ຍິງຖືພາ ແລະ ຮັບປະກັນว່າ 80 ເປີເຊັນຂອງ ຈຳນວນແມ່ຍິງຖືພາໄດ້ຮັບການບໍລິການເບິ່ງແຍງກ່ອນເກີດ (ຝາກທ້ອງ) ຢ່າງໜ້ອຍ 4 ຄັ້ງ.
- ຮອດປີ 2025, ຢ່າງໜ້ອຍ 85 ເປີເຊັນ ຂອງແມ່ຍິງຖືພາເກີດລູກຢູ່ໂຮງໝໍນຳແພດໝໍ (SBA) ຫຼື ຜະດຸງຄັນທີ່ມີທັກສະໃນການຊ່ວຍເກີດລູກ ແລະ ແມ່ຍິງຖືພາສາມາດເຂົ້າເຖິງການດູແລສຸຂະພາບທີ່ມີຄຸນະພາບເປັນປົກກະຕິ ຫຼື ກໍລະນີທີ່ມີຄວາມສ່ຽງສູງ ໄດ້ຮັບການປິ່ນປົວຕາມຄູ່ມືມາດຕະຖານແຫ່ງຊາດ.

ສຸຂະພາບເດັກເກີດໃໝ່

- ຮອດປີ 2025, ຍົກສູງຄຸນນະພາບ ແລະ ອັດຕາປົກຄຸມ ຂອງການດູແລພື້ນຖານທີ່ຈຳເປັນສຳລັບເດັກເກີດໃໝ່ ໃນໄລຍະທຳອິດ ແລະ ການລ້ຽງລູກດ້ວຍນົມແມ່ ແລະ ຮັບປະກັນว່າ 70 ເປີເຊັນ ຂອງເດັກເກີດໃໝ່ໄດ້ດູດນົມແມ່ພາຍໃນ 90 ນາທີທຳອິດຫຼັງການເກີດ.

ສຸຂະພາບເດັກນ້ອຍ ແລະ ໄວໜຸ່ມ

- ຮອດປີ 2025, ສະໜອງບໍລິການດູແລເດັກດີແບບເຊື່ອມສານ ເຊັ່ນ: ການໃຫ້ວັກຊີນປ້ອງກັນພະຍາດ, ໂພຊະນາການ ແລະ ການພັດທະນາເດັກກ່ອນໄວຮຽນ ແລະ ຮັບປະກັນว່າເດັກນ້ອຍທຸກຄົນທີ່ມາຮັບການບໍລິການສຸຂະພາບນຳ ໜ່ວຍບໍລິການເຄື່ອນທີ່ ຫຼື ໂຮງໝໍ ໄດ້ຮັບບໍລິການແບບເຊື່ອມສານຄົບຊຸດສຳລັບການດູແລເດັກດີ.
- ຮອດປີ 2025, ປັບປຸງການຄຸ້ມຄອງການເຊື່ອມສານພະຍາດໃນເດັກເກີດໃໝ່ ແລະ ເດັກນ້ອຍ ແລະ ຮັບປະກັນว່າ 80 ເປີເຊັນ ຂອງ ເດັກນ້ອຍທີ່ມີອາການຖອກທ້ອງ, ອັກເສບປອດ ແລະ ຂາດສານອາຫານກະທັນຫັນໄດ້ຮັບການປິ່ນທີ່ມີຄຸນນະພາບ ໂດຍອີງຕາມຄູ່ມືມາດຕະຖານແຫ່ງຊາດ.
- ສົ່ງເສີມການໃຫ້ບໍລິການສຸຂະພາບທີ່ຍືນຍົງ ແລະ ເປັນມິດຕໍ່ໄວໜຸ່ມ, ຂະຫຍາຍອັດຕາການປົກຄຸມ ແລະ ຍົກສູງການບໍລິການດັ່ງກ່າວໃຫ້ມີຄຸນນະພາບ, ແລະ ປັບປຸງຂໍ້ມູນທີ່ມີສຳລັບການໃຫ້ບໍລິການສຸຂະພາບ ແລະ ນຳໃຊ້ໂດຍໄວໜຸ່ມ.

*WHO, UNICEF, UNFPA, WB Group and the UN Population Division; Trends in Maternal Mortality 2000 to 2017; 2019